ໂດຍປະທານດີເດີ ແອັຟ ອຸກດອບ
ທີ່ປຶກສາທີສອງໃນຝ່າຍປະທານສູງສຸດ

ສິ່ງສຳຄັນຢ່າງໜຶ່ງທີ່ຈະມີ ຄອບຄົວທີ່ມີຄວາມສຸກ

ນັກຂຽນຜູ້ໂດ່ງດັງຄົນລັດເຊຍຄົນໜຶ່ງຊື່ ລຽວ ໂທສະຕອຍ ໄດ້ເລີ່ມຕົ້ນຂຽນປື້ມຊື່ *Anna Karenina* ດ້ວຍຖ້ອຍຄຳເຫລົ່ານີ້: "ຄອບຄົວທີ່ມີຄວາມສຸກທຸກ ຄອບຄົວແມ່ນຄືກັນ; ຄອບຄົວທີ່ບໍ່ມີຄວາມສຸກແຕ່ລະຄອບຄົວ ແມ່ນບໍ່ມີຄວາມສຸກໃນທາງຂອງໃຜມັນ."[1] ເຖິງແມ່ນ ຂ້າພະເຈົ້າບໍ່ມີຄວາມແນ່ນອນດັ່ງທ່ານໂທສະຕອຍ ທີ່ວ່າ ຄອບຄົວທີ່ມີຄວາມສຸກທຸກຄອບຄົວແມ່ນຄືກັນ, ແຕ່ຂ້າພະເຈົ້າ ໄດ້ພົບເຫັນສິ່ງໜຶ່ງທີ່ຜູ້ຄົນສ່ວນຫລາຍມີຄືກັນ: ເຂົາເຈົ້າຮູ້ຈັກ ໃຫ້ອະໄພ ແລະ ບໍ່ຈື່ຈຳຄວາມຂາດຕົກບົກພ່ອງຂອງຄົນ ອື່ນ ແລະ ຮູ້ຈັກຫລຽວເບິ່ງແຕ່ຄວາມດີຂອງຄົນອື່ນ.

ແຕ່ກົງກັນຂ້າມ, ຄົນທີ່ຢູ່ໃນຄອບຄົວທີ່ບໍ່ມີຄວາມສຸກ, ມັກຈະ ຊອກຫາຄວາມຜິດ, ຄຸ້ນເຄືອງ, ແລະ ເບິ່ງຄືວ່າບໍ່ສາມາດ ປ່ອຍການເຮັດຜິດໃຈທີ່ຜ່ານມານັ້ນໄປ.

"ແມ່ນແລ້ວ, ແຕ່ ..." ຜູ້ບໍ່ມີຄວາມສຸກກ່າວ. "ແມ່ນແລ້ວ, ແຕ່ເຈົ້າບໍ່ຮູ້ວ່າ ລາວໄດ້ເຮັດໃຫ້ຂ້ອຍເຈັບປວດຫລາຍຂະໜາດ ໃດ," ຄົນໜຶ່ງກ່າວ. "ແມ່ນແລ້ວ, ແຕ່ເຈົ້າບໍ່ຮູ້ວ່າ ລາວຮ້າຍ ກາດຫລາຍຂະໜາດໃດ," ອີກຄົນໜຶ່ງກ່າວ.

ບາງເທື່ອທັງສອງເວົ້າຖືກ; ບາງເທື່ອກໍບໍ່ມີຄົນໃດເວົ້າຖືກ.

ການເຮັດຜິດໃຈມີຢູ່ດ້ວຍກັນຫລາຍລະດັບ. ຄວາມເຈັບ ປວດກໍມີຢູ່ດ້ວຍກັນຫລາຍລະດັບ. ແຕ່ສິ່ງທີ່ຂ້າພະເຈົ້າເຄີຍ ສັງເກດເຫັນແມ່ນວ່າ ສ່ວນຫລາຍແລ້ວເຮົາມັກຈະໃຫ້ເຫດຜົນ ແກ່ຄວາມຄຽດແຄ້ນຂອງເຮົາໂດຍການເລົ່າເລື່ອງໃຫ້ຕົນເອງ ຟັງເຖິງຄວາມເຈດຕະນາຂອງຄົນອື່ນທີ່ເຮັດໃຫ້ການປະພຶດ ຂອງເຂົາເປັນເລື່ອງທີ່ບໍ່ສາມາດໃຫ້ອະໄພໄດ້ ແລະ ເຫັນແກ່ຕົວ, ຊຶ່ງໃນເວລາດຽວກັນ, ເຮົາມັກຈະຄິດວ່າຄວາມເຈດຕະນາ ຂອງເຮົາ ເປັນສິ່ງທີ່ບໍລິສຸດ ແລະ ບໍ່ມີຄວາມຜິດ.

ໝາຂອງເຈົ້າຊາຍ

ໃນນິຍາຍເລື່ອງໜຶ່ງຂອງຄົນແວວ (Welsh) ຈາກສັດຕະວັດທີ 13 ກ່ຽວກັບເຈົ້າຊາຍອົງໜຶ່ງທີ່ໄດ້ກັບມາວັງ ແລະ ເຫັນໝາ ຂອງລາວເລືອດຍ້ອຍຢູ່ນຳໜ້າຕາ. ເຈົ້າຊາຍໄດ້ຟ້າວແລ່ນເຂົ້າ ໄປຂ້າງໃນ, ຕົກໃຈຢ່າງໜັກ, ທີ່ໄດ້ເຫັນລູກຊາຍນ້ອຍຫາຍໄປ ແລະ ອູ່ຂວຈົ້າຢູ່. ໃນຄວາມຄຽດແຄ້ນນັ້ນ ລາວໄດ້ຖອດດາບ ຂອງລາວອອກມາ ແລະ ໄດ້ຂ້າໝາຂອງລາວ. ບໍ່ດົນຫລັງ ຈາກນັ້ນ, ລາວໄດ້ຍິນສຽງຮ້ອງໄຫ້ຂອງລູກຊາຍລາວ— ແອນ້ອຍຍັງມີຊີວິດຢູ່! ຢູ່ຂ້າງແອນ້ອຍນັ້ນ ມີໝາປ່າໂຕໜຶ່ງ ນອນຕາຍຢູ່. ຕາມຄວາມຈິງແລ້ວ, ໝາໄດ້ປົກປ້ອງລູກຊາຍ ຂອງເຈົ້າຊາຍໄວ້ເພື່ອບໍ່ໃຫ້ໝາປ່າທຳຮ້າຍ.

ເຖິງແມ່ນວ່າເລື່ອງນີ້ເປັນນິຍາຍ, ແຕ່ມັນໄດ້ສະແດງໃຫ້ເຫັນ ຈຸດສຳຄັນ. ມັນໄດ້ເປີດຄວາມເປັນໄປໄດ້ທີ່ວ່າ ເລື່ອງທີ່ເຮົາ ບອກຕົນເອງວ່າເປັນຫຍັງຄົນອື່ນຈຶ່ງປະພຶດຕົວໃນທາງທີ່ບໍ່ ເຂົ້າກັບຄວາມຈິງ—ບາງເທື່ອເຮົາອາດບໍ່ຮູ້ຈັກຄວາມຈິງເລີຍ. ແຕ່ເຮົາມັກຈະໃຫ້ເຫດຜົນທີ່ດີແກ່ຄວາມຄຽດແຄ້ນຂອງເຮົາ ໂດຍການເກັບຄວາມຂົມຂື່ນ ແລະ ຄວາມແຄ້ນໃຈໄວ້. ບາງເທື່ອຄວາມຄຸ້ນເຄືອງເຫລົ່ານີ້ອາດຄົງຢູ່ເປັນເວລາ ຫລາຍເດືອນ ຫລື ຫລາຍປີ. ບາງເທື່ອອາດເປັນຕະ ຫລອດຊີວິດ.

ຄອບຄົວທີ່ແຕກແຍກ

ພໍ່ຄົນໜຶ່ງບໍ່ສາມາດອະໄພໃຫ້ລູກຊາຍຂອງລາວຜູ້ທີ່ໄດ້ເດີນອອກນອກທາງທີ່ລາວໄດ້ຮັບການສິດສອນ. ລູກຊາຍມີໝູ່ເພື່ອນທີ່ພໍ່ບໍ່ຍອມຮັບຮູ້, ແລະ ລາວໄດ້ເຮັດຫລາຍສິ່ງທີ່ກົງກັນຂ້າມກັບສິ່ງທີ່ພໍ່ຂອງລາວໄດ້ຄິດວ່າ ລາວຄວນເຮັດ. ສິ່ງນີ້ໄດ້ເຮັດໃຫ້ພໍ່ ແລະ ລູກແຕກແຍກກັນ, ແລະ ທັນທີທີ່ລູກຊາຍສາມາດເຮັດໄດ້, ລາວກໍໄດ້ໜີໄປຈາກເຮືອນ ແລະ ບໍ່ກັບມາອີກ. ເຂົາເຈົ້າບໍ່ມັກເວົ້ານຳກັນອີກ.

ຜູ້ເປັນພໍ່ໄດ້ຄິດວ່າຕົນເອງຖືກຕ້ອງບໍ? ບາງທີ.

ຜູ້ເປັນລູກໄດ້ຄິດວ່າຕົນເອງຖືກຕ້ອງບໍ? ບາງທີ.

ສິ່ງທີ່ຂ້າພະເຈົ້າຮູ້ກໍຄື ຄອບຄົວນີ້ໄດ້ແຕກແຍກ ແລະ ບໍ່ມີຄວາມສຸກ ເພາະວ່າທັງພໍ່ ແລະ ລູກບໍ່ສາມາດອະໄພໃຫ້ກັນ. ເຂົາເຈົ້າບໍ່ສາມາດມອງຜ່ານອາດີດອັນຂົມຂື່ນທີ່ເຂົາເຈົ້າໄດ້ມີຕໍ່ກັນ. ຫົວໃຈຂອງເຂົາເຈົ້າເຕັມໄປດ້ວຍຄວາມຄຽດແຄ້ນແທນທີ່ຈະເປັນຄວາມຮັກ ແລະ ການໃຫ້ອະໄພ. ທັງສອງໄດ້ພາດໂອກາດທີ່ຈະເປັນອິດທິພົນໃນທາງດີໃຫ້ກັນ. ການແຕກແຍກລະຫວ່າງເຂົາເຈົ້າປະກົດວ່າເລິກລົ້ງຫລາຍ ແລະ ໄກອອກກັນຫລາຍ ຈົນວ່າແຕ່ລະຄົນຕ່າງໄດ້ເປັນນັກໂທດຢູ່ໃນເກາະແຫ່ງຄວາມຮູ້ສຶກຂອງຕົນເອງ.

ໂຊກດີທີ່ວ່າພຣະບິດານິລັນດອນຜູ້ສະຖິດຢູ່ໃນສະຫວັນຂອງເຮົາໄດ້ຈັດຫາທາງໃຫ້ເຮົາເອົາຊະນະຄວາມຈອງຫອງນີ້. ການຊຸດໃຊ້ອົບຍິ່ງໃຫຍ່ ແລະ ເປັນນິດເປັນການກະທຳທີ່ສຸດຍອດເຖິງການໃຫ້ອະໄພ ແລະ ການຄືນດີກັນ. ຄວາມໃຫຍ່ໂຕຂອງມັນນັ້ນແມ່ນເກີນກວ່າຄວາມເຂົ້າໃຈຂອງຂ້າພະເຈົ້າ, ແຕ່ຂ້າພະເຈົ້າຂໍເປັນພະຍານດ້ວຍສຸດຈິດໃຈຂອງຂ້າພະເຈົ້າເຖິງຄວາມເປັນຈິງ ແລະ ອຳນາດສູງສຸດຂອງມັນ. ພຣະຜູ້ຊ່ອຍໃຫ້ລອດໄດ້ມອບຕົນເອງ ເພື່ອເປັນຄ່າໄຖ່ເພື่อบาบของเรา. เราได้รับการให้อะไพเผ่านทางพระองค์.

ບໍ່ມີຄອບຄົວໃດທີ່ດີພ້ອມທຸກຢ່າງ

ບໍ່ມີຄົນໃດໃນພວກເຮົາທີ່ປາດສະຈາກບາບ. ເຮົາທຸກຄົນເຮັດຄວາມຜິດ, ຮ່ວມທັງພໍ່ແມ່ ແລະ ຂ້າພະເຈົ້າ. ເຮົາທຸກຄົນເຄີຍໄດ້ຮັບບາດເຈັບ. ເຮົາທຸກຄົນເຄີຍໄດ້ເຮັດໃຫ້ຄົນອື່ນໄດ້ຮັບບາດເຈັບ.

ແມ່ນຜ່ານການເສຍສະລະຂອງພຣະຜູ້ຊ່ອຍໃຫ້ລອດທີ่เราสามาถได้รับถวามสูงส่ง ແລະ ຊີວິດນິລັນດອນ. ເມື่ອເຮົາຮັບເອົາວິທີຂອງພຣະອົງ ແລະ ເອົາຊະນະຄວາມຈອງຫອງຂອງເຮົາໂດຍການເຮັດໃຫ້ຫົວໃຈຂອງເຮົາອ່ອນລົງ, ແລ້ວເຮົາຈະສາມາດນຳການຄືນດີກັນ ແລະ ການໃຫ້ອະໄພມາສູ່ຄອບຄົວຂອງເຮົາ ແລະ ຊີວິດສ່ວນຕົວຂອງເຮົາ. ພຣະເຈົ້າຈະຊ່ອຍເຫລືอเราให้เป็นคนที่ให้อะไพหลายขึ้น, เต็มใจที่จะเຮັດຫລາຍກວ່າທີ่ถูกขໃหเร็ด, เป็นคนทำอิดที่ขโพด ก่อน เถิงแม่นว่ามันบ่ได้เป็นถวามผิดของเราก็ตาม, เพื่อปะถิ้มถวามถุ้นเถื่อง ແລະ ບໍ່ເກັบมันไว้อีกต่ไป. ขอบพระคุนแด่พระเจ้า, ผู้ได้ปะทานบุดที่ถูกทำเบิด อ้างอ๋วของพระอ้าย, ແລະ ແด่พระบุด ผู้ที่ได้ปะทาน ชีวิดของพระอ้างเพื่อเรา.

ເຮົาสามาดรู้สึกเถิงถวามรักของพระเจ้าที่มีต่เรา ทุกๆวัน. เราบ่ถวรมอบตินเอาให้เพื่อนมะนุดของเรา ติมอิกจักหม่อยบ่ถ่างที่สอนอยู่ในบิดเพงสจดที่เรามัก มิถำว่า "เพาะเรำได้รับหลาย"?[2] พระผู้เป็นเจ้า ได้เปิดปะตูให้เราเพื่อจะได้รับการให้อะไพ. มัน บ่ได้เป็นสิ่งที่ถูกต้องบ่ที่จะปะถิ้มถวามอวดต๋ว ແລะ ถวามจองหองของเรา ແລะ เล่มต้นเปิดปะตูพอบ แห่งการให้อะไพนั้นต่คนที่เรามีบันหา—โดยสะเพาะต่ทุกคนอยู่ในถอบคัวของเราเอง?

ในที่สุด, ถวามสุกบ่ได้ออกมาจากถวามดีพ้อมทุกย่าง แต่ออกมาจากการนมำใช้หลักหำแห่งสะหวัน, แม่นแต่เป็นบาดก้าวน้อยๆ. ฝ่ายปะทานสูงสุด ແລะ สะพาอักถะสาวิกสิบสองได้ปะกาดว่า: ถอบคัวจะมีถวามสุกก่ต่เมื่อเขาเจ้าดำเนินชีวิดตามถำสอนของอ้างพระเยซูคิดเจ้า. การแต่งงาน ແລะ ถอบคัวจะมีถวามสำเล็ดได้ในชีวิดก่ต่เมื่อเขาเจ้าพ้นถ้างอยู่ในหลักหำแห่งสัดหา, การอะทิฐาน, การกับใจ, *การให้อะไพ*, การนับถิ, ถวามรัก, ถวามเมดตา, วรุทางาน, ແລะ ทิดจะทำที่ให้การพักผ่อนปอนอาลัมที่เป็นปะโพยดต่างๆ."[3]

การให้อะไพแม่นอยู่เถิ่งทางของถวามจิงที่ลรุบง่าย เหล่านั้น, ซึ่งตั้งไว้อยู่ในแผนแห่งถวามสุกของพระบิดา เท้งสะหวันของเรา. เพาะว่าการให้อะไพก่รวมพันกับหลักหำ, สะนั้นมันจึงก่รวมพันกับผู้คน. มันเป็นคุญะแจ, มันเปิดปะตู, มันเป็นต้นเส้นหางของถวามซื่สัด, ແລะ มันเป็นถวามหวังซึ่งที่ดีที่สุดของเรา สำลับถอบคัวที่มีถวามสุก.

ขให้พระเจ้าจ่างช่อยเหลือเราให้ให้อะไพในถอบคัวของเราหลายกว่าเก่า, ให้อะไพกันและกันหลายกว่าเก่า, ແລะ บางทีให้อะไพต๋นเองหลายกว่าเก่า. ข้าพะเจ้าอะทิฐานขให้เราถือว่า ปะสับการเลื่องการให้อะไพเป็นวิทีหนึ่งที่ดีเลิด ซึ่งในนั้นถอบคัวที่มีถวามสุกส่วนหลายจะเป็นถึกัน.

ແຫລ່ງອ້າງອີງ

1. Leo Tolstoy, *Anna Karenina,* trans. Constance Garnett (2008), 2.
2. "Because I Have Been Given Much," *Hymns,* no. 219.
3. "The Family: A Proclamation to the World," *Liahona,* Nov. 2010, 129; ເນັ້ນຄຳເນັ້ງ

ການສອນຈາກຂ່າວສານນີ້

"ເມື່ອທ່ານຕຽມບົດຮຽນແຕ່ລະບົດ, ໃຫ້ຖາມຕົນເອງວ່າ ຫລັກຫຳນັ້ນຄືກັນແນວໃດກັບບາງສິ່ງທີ່ສະມາຊິກໃນຄອບຄົວໄດ້ປະເຊີນໃນຊີວິດຂອງເຂົາເຈົ້າເອງ" (*Teaching, No Greater Call* [1999], 171). ເຊື້ອເຊີນສະມາຊິກໃນຄອບຄົວໃຫ້ແບ່ງປັນປະສົບການທີ່ດີ ຊຶ່ງເຂົາເຈົ້າໄດ້ມີ ຫລື ໄດ້ສັງເກດເຫັນກ່ຽວກັບການໃຫ້ອະໄພ. ໃຫ້ສົນທະນາກ່ຽວກັບປະສົບການເຫລົ່ານີ້, ໂດຍເນັ້ນໜັກເຖິງພອນແຫ່ງການໃຫ້ອະໄພ. ສະຫລຸບໂດຍການສະແດງປະຈັກພະຍານເຖິງຄວາມສຳຄັນຂອງການໃຫ້ອະໄພຊຶ່ງກັນແລະກັນ.

ຄົນໜຸ່ມ

ການອະທິຖານ ແລະ ຄວາມສະຫງົບ

ໂດຍ ລໍເຣນ ດັບເບີນຢູ

ວັນໜຶ່ງຂ້ານ້ອຍໄດ້ຜິດຖຽງກັນກັບແມ່ຂອງຂ້ານ້ອຍ ແລະ ຮູ້ສຶກບໍ່ສະບາຍໃຈຫລາຍ. ສະນັ້ນຂ້ານ້ອຍຈຶ່ງໄດ້ຕັດສິນໃຈອະທິຖານ. ເຖິງແມ່ນວ່າຂ້ານ້ອຍມີອາລົມບໍ່ດີ ແລະ ບໍ່ຢາກໃຫ້ເປັນ "ທາງວິນຍານ," ແຕ່ຂ້ານ້ອຍຮູ້ວ່າ ການອະທິຖານຈະຊ່ວຍໃຫ້ຂ້ານ້ອຍຮູ້ສຶກສະບາຍໃຈຂຶ້ນ ແລະ ບໍ່ຖຽງຫລາຍຄືເກົ່າ. ຫລັງຈາກແມ່ຂອງຂ້ານ້ອຍໄດ້ອອກຈາກຫ້ອງໄປ, ຂ້ານ້ອຍໄດ້ເລີ່ມຕົ້ນອະທິຖານ. "ໂອ້ ພຣະບິດາເທິງສະຫວັນ, ຂ້ານ້ອຍໄດ້ມາຫາພຣະອົງໃນຄ່ຳຄືນນີ້ ເພາະວ່າ ..." ບໍ່. ຂ້ານ້ອຍໄດ້ເປີດຕາ ແລະ ຖອດແຂນ; ມັນເປັນແບບເຍີ່ນໆ. ຂ້ານ້ອຍໄດ້ພະຍາຍາມໃໝ່. "ໂອ້ ພຣະບິດາເທິງສະຫວັນ, ຂ້ານ້ອຍຕ້ອງການ ..." ນັ້ນຟັງແລ້ວກໍເປັນແບບແປກໆ. ຂ້ານ້ອຍຮູ້ສຶກວ່າ ຊາຕານໄດ້ຊັກຊວນຂ້ານ້ອຍໃຫ້ເຊົາອະທິຖານ ຂໍຄວາມຊ່ວຍເຫລືອຈາກພຣະບິດາເທິງສະຫວັນ.

ທັນໃດນັ້ນ ຂ້ານ້ອຍໄດ້ຮັບການກະຕຸ້ນໃຫ້ກ່າວຂອບພຣະໄທ! ສະນັ້ນຂ້ານ້ອຍກໍໄດ້ເຮັດ, ແລະ ຄວາມຄິດໄດ້ເລີ່ມຕົ້ນຫລັ່ງໄຫລອອກມາຈາກຈິດໃຈຂອງຂ້ານ້ອຍເຖິງຫລາຍສິ່ງຫລາຍຢ່າງທີ່ຂ້ານ້ອຍສາມາດຂອບພຣະໄທພຣະບິດາຜູ້ສະຖິດຢູ່ໃນສະຫວັນຂອງຂ້ານ້ອຍ. ເມື່ອຂ້ານ້ອຍໄດ້ຂອບພຣະໄທພຣະອົງແລ້ວໆ, ຂ້ານ້ອຍກໍໄດ້ສົນທະນາກ່ຽວກັບບັນຫາທີ່ມີຢູ່.

ຫລັງຈາກນັ້ນຂ້ານ້ອຍຮູ້ສຶກສະຫງົບຢູ່ໃນຈິດໃຈ, ຄວາມຮູ້ສຶກທາງວິນຍານອັນອົບອຸ່ນທີ່ຂ້ານ້ອຍຮູ້ວ່າ ພຣະບິດາເທິງສະຫວັນຂອງເຮົາ ແລະ ພໍ່ແມ່ຂອງຂ້ານ້ອຍຮັກຂ້ານ້ອຍ ແລະວ່າຂ້ານ້ອຍເປັນລູກຂອງພຣະເຈົ້າ. ຂ້ານ້ອຍຈຶ່ງສາມາດໄປຂໍໂທດແມ່ຂອງຂ້ານ້ອຍ ແລະ ຮັບເອົາຄຳຂໍໂທດຈາກເພິ່ນ.

ເດັກນ້ອຍ

ການໃຫ້ອະໄພນຳຄວາມສຸກມາໃຫ້

ປະທານອຸກດອບສອນວ່າ ເຮົາຄວນໃຫ້ອະໄພຄົນໃນຄອບຄົວຂອງເຮົາ. ໃຫ້ເບິ່ງການເລືອກຂອງທ້າວໂຈເຊັບ ແລະ ນາງແອນນາວ່າມີຜົນກະທົບຕໍ່ຄອບຄົວຂອງພວກເຂົາແນວໃດ.

ທ້າວໂຈເຊັບ ແລະ ນ້ອງສາວນ້ອຍຂອງລາວ, ນາງແອນນາ, ພວມຫລິ້ນນຳກັນ. ນາງແອນນາໄດ້ຖືເອົາຂອງຫລິ້ນຂອງທ້າວໂຈເຊັບໄປຈາກລາວ. ທ້າວໂຈເຊັບຄວນເຮັດຫຍັງ?

ທ້າວໂຈເຊັບໄດ້ໃຈຮ້າຍໃຫ້ນາງແອນນາ. ນາງແອນນາໄດ້ຮ້ອງໄຫ້. ແມ່ຂອງທ້າວໂຈເຊັບໄດ້ລົງໂທດ ລາວເພາະວ່າ ລາວຜິດຖຽງກັບນ້ອງສາວຂອງລາວ. ທ້າວໂຈເຊັບເສຍໃຈທີ່ລາວໄດ້ເລືອກເຮັດສິ່ງທີ່ບໍ່ດີ.

ທ້າວໂຈເຊັບໄດ້ອະໄພໃຫ້ນາງແອນນາ ແລະ ໄດ້ຫາຂອງຫລິ້ນຢ່າງອື່ນມາຫລິ້ນ. ພວກເຂົາໄດ້ຫລິ້ນນຳກັນຢ່າງມ່ວນຊື່ນ. ແມ່ຂອງພວກເຂົາດີໃຈທີ່ທ້າວໂຈເຊັບເຮັດດີກັບນ້ອງສາວຂອງລາວ ແລະ ຮັກສາຄວາມສະຫງົບຢູ່ໃນບ້ານເຮືອນ. ທ້າວໂຈເຊັບດີໃຈທີ່ໄດ້ເລືອກໃຫ້ອະໄພ.

ຫລັງຈາກນັ້ນ, ທ້າວໂຈເຊັບ ແລະ ນາງແອນນາຕ້ອງໄດ້ຊ່ວຍເຫລືອແມ່ຕຽມເຮັດອາຫານແລງ. ທ້າວໂຈເຊັບບໍ່ໄດ້ຊ່ວຍເຫລືອ. ນາງແອນນາຄວນເຮັດຫຍັງ?

ນາງແອນນາໄດ້ເວົ້າຈົ່ມໃຫ້ແມ່ຟັງ. ນາງແອນນາໄດ້ຜິດຖຽງກ່ຽວກັບວ່ານາງຕ້ອງໄດ້ເຮັດວຽກງານຄົນດຽວ. ຕອນກິນເຂົ້າແລງທຸກຄົນບໍ່ມີຄວາມສຸກເພາະການຜິດຖຽງກັນ.

ນາງແອນນາໄດ້ອະໄພໃຫ້ທ້າວໂຈເຊັບ ແລະ ໄດ້ຊ່ວຍເຮັດວຽກກິນ. ແມ່ຂອງພວກເຂົາດີໃຈທີ່ນາງແອນນາໄດ້ຊ່ວຍເຫລືອ. ຄອບຄົວມ່ວນຊື່ນນຳກັນຕອນກິນເຂົ້າ. ນາງແອນນາຮູ້ສຶກສະບາຍໃຈທີ່ນາງໄດ້ເລືອກໃຫ້ອະໄພ.

ການເລືອກ *ຂອງເຈົ້າ* ທີ່ຈະໃຫ້ອະໄພມີຜົນກະທົບຕໍ່ຄວາມສຸກຂອງຄອບຄົວຂອງເຈົ້າແນວໃດ?

© 2012 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/11. ການແປໄດ້ຮັບອະນຸຍາດ: 6/11. ແປຈາກ ***First Presidency Message, October 2012.*** Laotian. 10370 331

ການໃຫ້ກຽດແກ່ພັນທະສັນຍາຂອງເຮົາ

ໃຫ້ສຶກສາຂ່າວສານນີ້ດ້ວຍການອະທິຖານ, ແລະ ເມື່ອເໝາະສົມໃຫ້ສົນທະນາກ່ຽວກັບມັນບາງເອື່ອຍນ້ອງທີ່ທ່ານໄປຢ້ຽມຢາມ. ໃຫ້ໃຊ້ຄຳຖາມຕ່າງໆເພື່ອຊ່ວຍທ່ານເພີ່ມຄວາມເຂັ້ມແຂງໃຫ້ແກ່ເອື່ອຍນ້ອງ ແລະ ເຮັດໃຫ້ສະມາຄົມສະຕີສົງເຄາະເປັນກິດຈະກຳໜຶ່ງໃນຊີວິດຂອງທ່ານເອງ.

ສັດທາ, ຄອບຄົວ, ສົງເຄາະ

ການຢ້ຽມສອນເປັນການສະແດງອອກເຖິງການເປັນສາວົກຂອງເຮົາ ແລະ ເປັນວິທີທີ່ເຮົາໃຫ້ກຽດແກ່ພັນທະສັນຍາຂອງເຮົາເມື່ອເຮົາຮັບໃຊ້ ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ກັນ ແລະກັນ. ພັນທະສັນຍາເປັນຄຳສັນຍາທີ່ສັກສິດ ແລະ ຍາວນານລະຫວ່າງພຣະເຈົ້າ ແລະ ລູກໆຂອງພຣະອົງ. “ເມື່ອເຮົາຮັບຮູ້ວ່າ ເຮົາເປັນລູກແຫ່ງພັນທະສັນຍາ, ແລ້ວເຮົາຈະຮູ້ວ່າເຮົາເປັນໃຜ ແລະ ພຣະເຈົ້າຄາດຫວັງສິ່ງໃດຈາກເຮົາ,” ແອວເດີ ຣະໂຊ ເອ້ມ ນຽວສັນ ແຫ່ງສະພາອັກຄະສາວົກສິບສອງໄດ້ກ່າວ. “ກົດຂອງພຣະອົງໄດ້ຖືກຂຽນໄວ້ຢູ່ໃນໃຈຂອງເຮົາ. ພຣະອົງເປັນພຣະເຈົ້າຂອງເຮົາ ແລະ ເຮົາເປັນຜູ້ຄົນຂອງພຣະອົງ.”[1]

ໃນຖານະທີ່ເປັນຄູ່ຢ້ຽມສອນ ເຮົາສາມາດເພີ່ມຄວາມເຂັ້ມແຂງໃຫ້ແກ່ຄົນທີ່ເຮົາໄປຢ້ຽມຢາມໃນຄວາມພະຍາຍາມຂອງເຂົາເຈົ້າທີ່ຈະຮັກສາພັນທະສັນຍາອັນສັກສິດຂອງເຂົາເຈົ້າ. ໃນການເຮັດເຊັ່ນນັ້ນ, ເຮົາໄດ້ຊ່ວຍເຫລືອເຂົາເຈົ້າຕຽມສຳລັບພອນແຫ່ງຊີວິດນິລັນດອນ. “ເອື່ອຍນ້ອງທຸກຄົນຢູ່ໃນສາດສະໜາຈັກນີ້ ຜູ້ໄດ້ເຮັດພັນທະສັນຍາກັບພຣະຜູ້ເປັນເຈົ້າໄດ້ຖືກມອບໝາຍໃຫ້ຊ່ວຍກູ້ຈິດວິນຍານ, ໃຫ້ບຳພາສະຕິຂອງໂລກ, ໃຫ້ເພີ່ມຄວາມເຂັ້ມແຂງໃຫ້ແກ່ບ້ານເຮືອນຂອງສີໂອນ, ແລະ ໃຫ້ສ້າງອານາຈັກຂອງພຣະເຈົ້າ”[2] ແອວເດີ ເອ້ມ ຣະໂຊ ບາເລີດ ແຫ່ງສະພາອັກຄະສາວົກສິບສອງໄດ້ກ່າວ.

ເມື່ອເຮົາເຮັດ ແລະ ຮັກສາພັນທະສັນຍາອັນສັກສິດ, ເຮົາຈະໄດ້ກາຍເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າ. ເຮົາຈະສາມາດຕໍ່ຄວາມເຊື່ອຂອງເຮົາເຂົ້າກັນ ແລະ ເພີ່ມຄວາມເຂັ້ມແຂງໃຫ້ສັດທາຂອງກັນແລະກັນໃນພຣະບິດາເທິງສະຫວັນ ແລະ ພຣະເຢຊູຄຣິດໄດ້.

ຈາກພຣະຄຳພີ

1 Nephi 14:14; ໂມໄຊຢາ 5:5–7; 18:8–13; Doctrine and Covenants 42:78; 84:106

ຈາກປະຫວັດສາດຂອງເຮົາ

ພຣະວິຫານເປັນບ່ອນຂອບພຣະໄທສຳລັບໄພ່ພົນທັ້ງຫລາຍຂອງພຣະເຈົ້າ, ຊຶ່ງພຣະຜູ້ເປັນເຈົ້າໄດ້ເປີດເຜີຍຕໍ່ສາດສະດາໂຈເຊັບ ສະມິດ ໃນປີ 1833. ມັນເປັນບ່ອນໃຫ້ການແນະນຳສຳລັບທຸກຄົນເຫລົ່ານັ້ນຜູ້ທີ່ຖືກເອີ້ນໃຫ້ເຮັດວຽກງານແຫ່ງການປະຕິບັດສາດສະໜາກິດໃນການເອີ້ນ ແລະ ໜ້າທີ່ຫລາຍຢ່າງຂອງເຂົາເຈົ້າ; ເພື່ອວ່າເຂົາເຈົ້າຈະຖືກເຮັດໃຫ້ດີພ້ອມໃນຄວາມເຂົ້າໃຈເລື່ອງການປະຕິບັດສາດສະໜາກິດຂອງເຂົາເຈົ້າ, ໃນທິດສະດີ, ໃນຫລັກທຳ, ແລະ ໃນຄຳສອນ, ໃນທຸກສິ່ງທັ້ງປວງກ່ຽວກັບອານາຈັກຂອງພຣະເຈົ້າເທິງແຜ່ນດິນໂລກ (ເບິ່ງ D&C 97:13–14).

ເອື່ອຍນ້ອງສະມາຄົມສະຕີສົງເຄາະຢູ່ໃນເມືອງນາວູ, ລັດອິລິນອຍ, ໃນຕົ້ນໄລຍະປີ 1840 ໄດ້ຊ່ອຍເຫລືອກັນຕຽມສຳລັບພິທີການຂອງພຣະວິຫານ. ໃນພິທີການຂອງຖານະປະໂລຫິດທີ່ສູງກວ່າທີ່ໄພ່ພົນຍຸກສຸດທ້າຍໄດ້ຮັບຢູ່ໃນພຣະວິຫານນາວູ, ອຳນາດຂອງຄວາມເປັນເໝືອນພຣະເຈົ້າ [ໄດ້] ສະແດງໃຫ້ປະຈັກ (ເບິ່ງ D&C 84:20). “ເມື່ອໄພ່ພົນຂອງພຣະເຈົ້າໄດ້ຮັກສາພັນທະສັນຍາຂອງເຂົາເຈົ້າ, ອຳນາດນີ້ໄດ້ເພີ່ມຄວາມເຂັ້ມແຂງ ແລະ ຄ້ຳຈຸນເຂົາເຈົ້າຜ່ານການທົດລອງຂອງເຂົາເຈົ້າໃນຫລາຍວັນ ແລະ ຫລາຍປີໃນພາຍຂ້າງໜ້າ.”[3]

ໃນສາດສະໜາຈັກໃນທຸກວັນນີ້, ຍິງ ແລະ ຊາຍທີ່ຊື່ສັດໃນທົ່ວໂລກໄດ້ຮັບໃຊ້ຢູ່ໃນພຣະວິຫານ ແລະ ສືບຕໍ່ພົບຄວາມເຂັ້ມແຂງໃນພອນທີ່ໜຽງແຕ່ສາມາດໄດ້ຮັບຜ່ານພັນທະສັນຍາຢູ່ໃນພຣະວິຫານເທົ່ານັ້ນ.

ແຫລ່ງອ້າງອີງ

1. Russell M. Nelson, “Covenants,” *Liahona,* Nov. 2011, 88.
2. M. Russell Ballard, “Women of Righteousness,” *Liahona,* Dec. 2002, 39.
3. *Daughters in My Kingdom: The History and Work of Relief Society* (2011), 133.

ເຮົາສາມາດເຮັດຫຍັງແດ່?

1. ພັນທະສັນຍາຂອງເຮົາເພີ່ມຄວາມ
ເຂັ້ມແຂງໃຫ້ເຮົາແນວໃດ?

2. ເຮົາຈະຊ່ອຍເຫລືອເອື້ອຍນ້ອງທີ່ເຮົາ
ຄູແລໃຫ້ຮັກສາພັນທະສັນຍາຂອງ
ເຂົາເຈົ້າໄດ້ແນວໃດ?

ສຳລັບລາຍລະອຽດເພີ່ມເຕີມ,
ໃຫ້ເປີດເບິ່ງທີ່ reliefsociety.lds.org.

© 2012 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອ້ັງກິດໄດ້ຮັບອະນຸຍາດ: 6/11.
ການແປໄດ້ຮັບອະນຸຍາດ: 6/11. ແປຈາກ *Visiting Teaching Message, October 2012.* Laotian. 10370 331